ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 06/ພນ

ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2023

# ຄຳແນະນຳ
# ກ່ຽວກັບ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ ສະບັບເລກທີ 45/ສພຊ, ລົງວັນທີ 15 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 07/ປທ, ລົງວັນທີ 12 ມັງກອນ 2023.

## ລັດຖະມົນຕີ ອອກຄຳແນະນຳ:

## I. ຈຸດປະສົງ ແລະ ຄາດໝາຍ

### 1. ຈຸດປະສົງ

1.1. ເພື່ອກຳນົດທິດນຳ, ຂັ້ນຕອນ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ໃຫ້ຖືກຕ້ອງຕາມລະບຽບຫຼັກການ;

1.2. ເພື່ອໃຫ້ມີຄວາມສະດວກໃຫ້ແກ່ການຄຸ້ມຄອງ, ການພັດທະນາ ແລະ ການດຳລົງຊີວິດຂອງປະຊາຊົນ;

1.3. ເພື່ອໃຫ້ມີຄວາມເຂົ້າໃຈເປັນເອກະພາບ ໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມຂອງທ້ອງຖິ່ນ.

### 2. ຄາດໝາຍ

2.1. ມີລະບຽບຫຼັກການທີ່ເປັນບ່ອນອີງທາງດ້ານນິຕິກຳ ໃຫ້ອົງການປົກຄອງທ້ອງຖິ່ນ ໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

2.2. ບ້ານມີຄວາມເຂັ້ມແຂງສາມາດຂຸດຄົ້ນ, ເສີມຂະຫຍາຍ, ນຳໃຊ້ທ່າແຮງບົ່ມຊ້ອນ, ມີກຳລັງແຮງໃຫ້ແກ່ການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງ;

2.3. ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ.

**II. ທິດນຳ**

ການຈັດຕັ້ງປະຕິບັດການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ໃຫ້ປະຕິບັດຕາມທິດນຳ ດັ່ງນີ້:

1. ຖືກຕ້ອງ, ສອດຄ່ອງຕາມກົດໝາຍ, ລະບຽບການ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ;

2. ແທດເໝາະກັບສະພາບຈຸດພິເສດ, ເງື່ອນໄຂຄວາມຈຳເປັນຂອງທ້ອງຖິ່ນ ແລະ ການພັດທະນາ;

3. ຮັບປະກັນຄວາມເປັນເອກະພາບ;

4. ຮັກສາໄດ້ຄວາມສະຫງົບ ແລະ ຄວາມສາມັກຄີ.

**III. ຂັ້ນຕອນ ແລະ ການປະກອບເອກະສານ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ການປ່ຽນຊື່ບ້ານ**

**1. ຂັ້ນຕອນ**

ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ການປ່ຽນຊື່ບ້ານ ໃຫ້ປະຕິບັດ ດັ່ງນີ້:

1.1. ຫ້ອງການພາຍໃນຄົ້ນຄວ້າ ສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນແຕ່ງຕັ້ງຄະນະຮັບຜິດຊອບການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ຊຶ່ງຄະນະຮັບຜິດຊອບປະກອບມີ:

| | |
|---|---|
| – ຮອງເລຂາພັກ, ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກພາຍໃນ | ເປັນຫົວໜ້າ; |
| – ຫົວໜ້າຫ້ອງການພາຍໃນ | ເປັນຮອງ; |
| – ຕາງໜ້າຄະນະຈັດຕັ້ງ | ເປັນຄະນະ; |
| – ຕາງໜ້າຫ້ອງວ່າການ | ເປັນຄະນະ; |
| – ພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ | ເປັນຄະນະ. |

1.2. ຄະນະຮັບຜິດຊອບສົມທົບກັບຫ້ອງການພາຍໃນເປັນເສນາທິການຄົ້ນຄວ້າ ແລະ ເປັນເຈົ້າການລົງເກັບກຳຂໍ້ມູນ ເພື່ອເຮັດບົດວິພາກສຳລັບການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ ແລະ ເຮັດບົດລາຍງານສຳລັບການປ່ຽນຊື່ບ້ານ;

1.3. ຄະນະຮັບຜິດຊອບສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນພິຈາລະນາ ແລະ ກະກຽມປະກອບສຳນວນເອກະສານຄັດຕິດ;

1.4. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ສະເໜີ ຫາ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ.

**2. ການປະກອບເອກະສານ**

ການປະກອບເອກະສານການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ມີດັ່ງນີ້:

2.1. ບົດວິພາກສຳລັບການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ ຊຶ່ງບົດວິພາກມີເນື້ອໃນທີ່ປະກອບດ້ວຍ ສະພາບທົ່ວໄປ, ເຫດຜົນຄວາມຈຳເປັນ, ຄວາມພ້ອມ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ, ດ້ານດີ ດ້ານອ່ອນ, ວິທີແກ້ໄຂ ແລະ ບັນຫາອື່ນໆ;

2.2. ບົດລາຍງານສຳລັບການປ່ຽນຊື່ບ້ານ;

2.3. ເອກະສານຄັດຕິດຂອງບ້ານ;

2.4. ບັນດາເອກະສານທີ່ກ່ຽວຂ້ອງ.

**IV. ການຈັດຕັ້ງປະຕິບັດ**

1. ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;

2. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ;

3. ພະແນກພາຍໃນ, ຫ້ອງການພາຍໃນ ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນປົກກະຕິ;

4. ໃນການຈັດຕັ້ງປະຕິບັດ ຫາກພົບບັນຫາ ຄວາມຫຍຸ້ງຍາກ ໃຫ້ຮີບຮ້ອນສະເໜີລາຍງານ ຕໍ່ພາກສ່ວນທີ່ກ່ຽວຂ້ອງຕາມຂັ້ນຕອນ ເພື່ອພິຈາລະນາ;

5. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳສະບັບເລກທີ 09/ພນ, ລົງວັນທີ 24 ສິງຫາ 2016 ກ່ຽວກັບ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ.

ລັດຖະມົນຕີ

ກະຊວງພາຍໃນ
ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ

ເອກະສານຊ້ອນທ້າຍ: *ຮ່າງຕົວຢ່າງຮູບແບບບົດວິພາກ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ*

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງ, ເທດສະບາດ, ນະຄອນ
ຄະນະຮັບຜິດຊອບ　　　　　　　　　　　　　　　　　　ວັນທີ..... ເດືອນ.....ປີ......

# (ຮ່າງຕົວຢ່າງ) ຮູບແບບບົດວິພາກ
# ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ........., ລົງວັນທີ...................... ;
- ອີງຕາມ ຄຳແນະນຳ ຂອງກະຊວງພາຍໃນກ່ຽວກັບ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ສະບັບເລກທີ　　/ພນ, ລົງວັນທີ　　ມັງກອນ 2023.
- ອີງຕາມ ......................................................................................................................

## I. ສະພາບທົ່ວໄປ

1. ທີ່ຕັ້ງຂອບເຂດພູມສັນຖານ ແລະ ລັກສະນະຈຸດພິເສດສະເພາະ
2. ສະພາບວັດທະນະທຳ-ສັງຄົມ
3. ສະພາບເສດຖະກິດ
4. ສະພາບທາງດ້ານການປ້ອງກັນຊາດ ປ້ອງກັນຄວາມສະຫງົບ
5. ການຈັດຕັ້ງຂອງອົງການປົກຄອງບ້ານ
6. ສະພາບອື່ນໆ

## II. ເຫດຜົນຄວາມຈຳເປັນ

1. ດ້ານທີ່ຕັ້ງພູມສັນຖານ
2. ດ້ານວັດທະນະທຳ-ສັງຄົມ
3. ດ້ານເສດຖະກິດ
4. ດ້ານການປ້ອງກັນຊາດ ປ້ອງກັນຄວາມສະຫງົບ
5. ອື່ນໆ

## III. ຄວາມພ້ອມ

1. ຄວາມພ້ອມ ແລະ ຄວາມຄິດເຫັນ ຂອງປະຊາຊົນພາຍໃນບ້ານ
2. ຄວາມພ້ອມ ແລະ ຄວາມຄິດເຫັນ ຂອງການຈັດຕັ້ງບ້ານ
3. ຄວາມພ້ອມ ດ້ານຕ່າງໆ

**<u>ເອກະສານຊ້ອນທ້າຍ:</u>** *ຮ່າງຕົວຢ່າງຮູບແບບບົດວິພາກ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ*

## IV. ຂໍ້ສະດວກ ຂໍ້ຫຍຸ້ງຍາກ

1. ຂໍ້ສະດວກ ຂອງການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ
2. ຂໍ້ຫຍຸ້ງຍາກ ຂອງການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ

## V. ດ້ານດີ ດ້ານອ່ອນ

1. ດ້ານດີ ພາຍຫຼັງ ມີການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ
2. ດ້ານອ່ອນ ພາຍຫຼັງ ມີການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ບ້ານ

## VI. ບັນຫາອື່ນໆ

.......................................................................................................................................

**ຫົວໜ້າຄະນະຮັບຜິດຊອບ**